# ບໍລິສັດ ພູເບ້ຍ ມາຍນິງ ຜະລິດທອງໃນແຮ່ເຂັ້ມຂຸ້ນຫຼາຍກວ່າ 1 ລ້ານໂຕນ



*Left:* ໂຄງການຂຸດຄົ້ນ-ປຸງແຕ່ງທອງ-ຄຳ ພູຄຳ *The Phu KhamCopper-Gold Operation.*

ໃນເດືອນນີ້, ບໍລິສັດ ພູເບ້ຍ ມາຍນິງ ບັນລຸຂີດໝາຍອັນສຳຄັນຢູ່ໂຄງການຂຸດຄົ້ນ-ປຸງແຕ່ງທອງ-ຄຳ ພູຄຳ ຊຶ່ງມີການຜະລິດທອງໃນແຮ່ເຂັ້ມຂຸ້ນໜຶ່ງລ້ານໂຕນ.

ໂຄງການຂຸດຄົ້ນ-ປຸງແຕ່ງທອງ-ຄຳ ພູຄຳ ເລີ່ມການຂຸດຄົ້ນທອງ 16 ປີຜ່ານມາ. ທຸກພະແນກການຂອງໂຄງການແມ່ນໄດ້ປະຕິບັດຕາມມາດຕະຖານສາກົນ. ແຮງງານ ຊຶ່ງມີພະນັກງານຄົນລາວກວມເອົາ 93% ໄດ້ປະກອບສ່ວນວຽກງານຢ່າງຫ້າວຫັນ ແລະ ດຸໝັ່ນ ເພື່ອຮັບປະກັນໃຫ້ບໍ່ຂຸດຄົ້ນມີຄວາມປອດໄພ, ມີປະສິດທິຜົນ ແລະ ມີນະວັດຕະກຳໃໝ່. ເພື່ອໃຫ້ໄດ້ຮັບໝາກຜົນສຳເລັດຂອງການຜະລິດທອງໜຶ່ງລ້ານໂຕນ, ຕ້ອງມີການຜະລິດຫຼາຍກວ່າ 135.000 ຊົ່ວໂມງຈາກທີມງານຢູ່ພູຄຳ, ມີການຂຸດຄົ້ນແຮ່ຫຼາຍກວ່າ 800 ລ້ານໂຕນ ແລະ ປ້ອນສິນແຮ່ເຂົ້າໂຮງງານເພື່ອປຸງແຕ່ງປະມານ 65 ລ້ານໂຕນ.

ທອງແມ່ນໂລຫະທາດທີ່ນຳມາແປຮູບໄດ້ຫຼາກຫຼາຍ ໂດຍມີການນຳໃຊ້ຫຼາຍສ່ວນເຂົ້າໃນການສົ່ງກະແສໄຟຟ້າ ແລະ ຄວາມຮ້ອນທີ່ດີເລີດ, ມີຄວາມທົນທານຕໍ່ການເຂົ້າໝ້ຽງ ແລະ ມີຄວາມສາມາດເຊື່ອມຈອດກັບໂລຫະທາດອື່ນໆ. ດ້ວຍຜົນປະໂຫຍດຂອງການນຳໃຊ້ທີ່ຫຼາກຫຼາຍ, ທອງຍັງເຕີບໂຕໃນຕະຫຼາດລົດໄຟຟ້າ ຊຶ່ງຕ້ອງການທອງຈຳນວນມະຫາສານ ເນື່ອງຈາກທອງແມ່ນອົງປະກອບສຳຄັນໃນພະລັງໄຟຟ້າ. ລົດໄຟຟ້າທີ່ໃຊ້ໝໍ້ໄຟ ໂດຍທົ່ວໄປແມ່ນຕ້ອງໃຊ້ທອງຢູ່ 80 ກິໂລກຣາມ. ນີ້ແມ່ນຫຼາຍກວ່າລົດທີ່ໃຊ້ນ້ຳມັນເຊື້ອໄຟທົ່ວໄປ ຊຶ່ງຈະໃຊ້ທອງໃນໝໍ້ໄຟຢູ່ປະມານ 8 ແລະ 22 ກິໂລກຣາມ. ການນຳໃຊ້ທອງທີ່ເພີ່ມຂຶ້ນໃນລົດໄຟຟ້າແມ່ນສຳຄັນສຳລັບເຄື່ອງຈັກ, ໝໍ້ໄຟ, ຕົວແຮງຂັບເຄື່ອນ ແລະ ສາຍໄຟໃນລົດໄຟຟ້າ. ສຳລັບພາຫະນະຂະໜາດໃຫຍ່ເຊັ່ນ: ລົດເມແມ່ນນຳໃຊ້ທອງຫຼາຍກວ່າ 350 ກິໂລກຣາມ. ການສົ່ງກະແສໄຟຟ້າທີ່ດີ, ລາຄາໃຊ້ຈ່າຍທີ່ມີປະສິດທິຜົນ ແລະ ຄວາມທົນທານຂອງທອງ ຖືເປັນອົງປະກອບອັນສຳຄັນໃນພາຫະນະລົດໄຟຟ້າຂາດບໍ່ໄດ້. ທອງຍັງໄດ້ນຳໃຊ້ໃນການຜະລິດສາຍໄຟຟ້າ ເພາະມີຄວາມສາມາດສົ່ງກະແສໄຟຟ້າໄດ້ດີ.

ການດຳເນີນງານຂອງໂຮງງານ ພູຄຳ ໃນແຂວງ ໄຊສົມບູນ ໄດ້ສ້າງຜົນປະໂຫຍດຍາວນານສຳລັບບັນດາຊຸມຊົນທ້ອງຖິ່ນ, ລັດຖະບານຂັ້ນສູນກາງ ແລະ ຂັ້ນແຂວງ. ການສຳຫຼວດເສດຖະກິດ-ສັງຄົມ ໃນຄົວເຮືອນ ປີ 2022, ທີ່ບໍລິສັດໄດ້ຈັດຈ້າງຊ່ຽວຊານເອກະລາດມາດຳເນີນການສຳຫຼວດ ຊຶ່ງໄດ້ຈັດຕັ້ງຢູ່ບ້ານນ້ຳໂມ້, ນ້ຳຍອນ ແລະ ນາໄຊສະຫວ່າງ ພົບວ່າມີການປັບປຸງທີ່ດີ ຊຶ່ງໃນດ້ານການສຶກສາ, ໂຄງລ່າງ, ສາທາລະນະສຸກຊຸມຊົນທ້ອງຖິ່ນ, ກະສິກຳ ແລະ ການພັດທະນາທຸລະກິດຂະໜາດນ້ອຍ. ອັດຕາການຮູ້ໜັງສືສຳລັບປະຊາຊົນຢູ່ໃນສາມບ້ານໄດ້ເພີ່ມຂຶ້ນ 90%, ສູງກວ່າອັດຕາການຮູ້ໜັງສືລະດັບຊາດ.

ນັບຕັ້ງແຕ່ມີໂຮງງານ ພູຄຳ, ປັດຈຸບັນ ເຂດສາມບ້ານໄດ້ເຂົ້າເຖິງການບໍລິການຂອງແພດໝໍຢູ່ສຸກສາລາທີ່ບໍລິສັດ ພູເບ້ຍ ມາຍນິງ ໄດ້ໃຫ້ທຶນ. ພະນັກງານຊົນເຜົ່າທ້ອງຖິ່ນຂອງບໍລິສັດກວມເອົາຈຳນວນຫຼາຍຂອງພະນັກງານຄົນລາວ 93% ແລະ ໄດ້ປະກອບສ່ວນລາຍຮັບເຂົ້າໃນບ້ານດັ່ງກ່າວ ສູງເຖິງ 50%. ທຸລະກິດຂະໜາດນ້ອຍທີ່ຂາຍຜັກ, ໄຂ່, ຖົງໃສ່ເຄື່ອງນຸ່ງ, ໝາກໄມ້ ແລະ ປາໃຫ້ເຂດດຳເນີນງານຂອງບໍລິສັດ, ໄດ້ສ້າງລາຍຮັບຫຼາຍກວ່າ 4,5 ລ້ານໂດລາໃຫ້ແກ່ປະຊາຊົນໃນທ້ອງຖິ່ນ. ການມອບພັນທະຂອງບໍລິສັດແມ່ນຫຼາຍກວ່າ 1 ຕື້ໂດລາໂດຍມີຄ່າຊັບພະຍາກອນແຮ່ທາດ, ອາກອນກຳໄລ, ອາກອນເງິນເດືອນ, ອາກອນທາງ, ຄ່າທຳນຽມນຳເຂົ້າ, ຄ່າຊຳປະທານ, ການສະໜັບສະໜູນ ແລະ ເງິນປັນຜົນໄດ້ຊ່ວຍເຂົ້າໃນການສ້າງສາພັດທະນາແຂວງໄຊສົມບູນ ແລະ ເສດຖະກິດຂອງລາວ.

ທ່ານ ດາລິງ ເຊັງ ຜູ້ອຳນວຍການໃຫຍ່ ແລະ ປະທານບໍລິຫານຂອງບໍລິສັດ ແພນອອສ໌ ໄດ້ກ່າວຢ່າງພາກພູມໃຈຕໍ່ຂີດໝາຍການຜະລິດຂອງໂຄງການພູຄຳ. ທ່ານ ດາລິງ ກ່າວວ່າ "ໂຄງການ ພູຄຳແມ່ນເຂດດຳເນີນງານສ້າງລາຍຮັບຫຼັກຂອງບໍລິສັດ ແພນອອສ໌ ແລະ ມີສ່ວນອັນສຳຄັນຂອງການເຕີບໂຕທຸລະກິດຂອງພວກເຮົາໃນລາວ.

"ເລີ່ມຕົ້ນການຜະລິດໃນປີ 2008, ບໍລິສັດ ແພນອອສ໌ ໂດຍຜ່ານບໍລິສັດພູເບ້ຍ ມາຍນິງໄດ້ດຳເນີນວຽກງານໂຄງລ່າງຂະໜາດໃຫຍ່ ເພື່ອໃຫ້ສາມາດຂະຫຍາຍບໍ່ຂຸດຄົ້ນ ແລະ ຕໍ່ອາຍຸຂອງບໍ່ພູຄຳ. ໂຄງການຊີເຈາະ ແລະ ສຳຫຼວດຂຸດຄົ້ນຈະສືບຕໍ່ຊອກຄົ້ນສິນແຮ່ເພີ່ມຕື່ມໃນເຂດສຳປະທານອ້ອມຂ້າງຂອງບໍລິສັດ. ນີ້ຈະສະໜອງຜົນປະໂຫຍດທາງກົງ ແລະ ໄລຍະຍາວໃຫ້ປະເທດຊາດ ແລະ ປະຊາຊົນລາວ".

ທ່ານ ຈັນເພັງ ບຸນນະຜົນ ປະທານບໍລິສັດ ພູເບ້ຍ ມາຍນິງ ໃຫ້ຮູ້ຕື່ມອີກວ່າ: "ພວກເຮົາຕັ້ງເປົ້າປະຈຳປີຂອງພວກເຮົາເພື່ອຊອກສິນແຮ່ປ້ອນເຂົ້າໂຮງງານປຸງແຕ່ງ ພູຄຳ. ໃນລາຄາທອງໃນປັດຈຸບັນ, ບໍລິສັດແມ່ ຊຶ່ງບໍລິສັດ ແພນອອສ໌ ແມ່ນມີທຶນ ພ້ອມເພື່ອຂັບເຄື່ອນການລົງທຶນເພີ່ມຂຶ້ນໃນ ພູຄຳ ແລະ ສົ່ງອອກແຮ່ທອງຫຼາຍຂຶ້ນຈາກລາວໄປຕະຫຼາດໂລຫະທາດສາກົນ".





ຜູ້ຊີ້ນຳ
ທ່ານ ວັນໄຊ ຕະວິນຍານ ຮອງຫົວໜ້າຄະນະໂຄສະນາອົບຮົມສູນກາງພັກ
ຫົວໜ້າບັນນາທິການໃຫຍ່ໜັງສືພິມປະຊາຊົນ (020) 55668332

ຮອງຫົວໜ້າບັນນາທິການໃຫຍ່
ທ່ານ ນາງ ປານີ ມະນີທິບ (020) 55701183
ທ່ານ ສີວັນ ທອນໄຊຍະເດດ (020) 55413454

ຫົວໜ້າພະແນກບັນນາທິການຂ່າວການເມືອງ - ເສດຖະກິດ
ທ່ານ ຄຳເຮືອງ ຄຳປະສິດ (020) 56431159
(021) 336119

ຫົວໜ້າພະແນກບັນນາທິການຂ່າວວັດທະນະທຳ - ສັງຄົມ
ທ່ານ ຕຸໄລເພັດ ພົນເມືອງ (020) 22240119
(021) 336118

ຮັກສາການຫົວໜ້າພະແນກບັນນາທິການຂ່າວຕ່າງປະເທດ ແລະ ໜັງສືພິມ ເອເລັກໂຕຣນິກ
ທ່ານນາງ ຈັນທະລາ ໄຊຍະເຫຼັກ (020) 55658399

ຫົວໜ້າພະແນກ ເຕັກນິກ - ຈັດໜ້າ ແລະ ກວດແກ້
ທ່ານນາງ ທອງດຳ ລິດອຸທຸມ (020) 52233864

ຫົວໜ້າພະແນກຄຸ້ມຄອງ ໂຄສະນາ ແລະ ຈຳໜ່າຍ
ທ່ານ ນາງ ມາລາຄອນ ອູບຄຳ
(021) 336111 Fax: (021) 336112